



ກອງປະຊຸມດັ່ງກ່າວໄດ້ໄຂຂຶ້ນໃນຕອນເຊົ້າຂອງວັນທີ 04/01/2012 ທີ່ທ່າລາດ (ບ້ານພັກແຄມງື່ມ) ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ພູວຽງ ພູມີໄລ ຮອງຫົວໜ້າກົມອາຊີວະສຶກສາ ກອງປະຊຸມຄັ້ງນີ້ມີຜູ້ເຂົ້າຮ່ວມທັງໝົດ 35 ທ່ານ, ຍິງ 05 ທ່ານ, ເຊິ່ງມີຕົວແທນມາຈາກ ກົມອາຊີວະສຶກສາ, ກົມຈັດຕັ້ງ ແລະ ພະນັກງານ ແລະ ມີບັນດາຜູ້ອຳນວຍການ, ຮອງອຳນວຍການ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ,ຈາກສູນ, ວິທະຍາໄລ ແລະ ໂຮງຮຽນເຕັກນິກວິຊາຊີບຈາກທົ່ວປະເທດ, ກອງປະຊຸມໄດ້ຄົ້ນຄ້ວາ, ທົບທວນ, ຕີລາຄາດ້ານດີ-ດ້ານອ່ອນ ແລະ ຖອດຖອນບົດຮຽນ ໃນການນຳໃຊ້ປຶ້ມຄູ່ມືກົມ, ຄູ່ມືວິທະຍາໄລ, ຄູ່ມືໂຮງຮຽນ ແລະ ສ້າງກົດໝາຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ.



